# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ 13 ທັນວາ 2009 (12-13-2009)

## ໃຫ້ໂລກຍິນດີ

**ຂໍ້ພຣະຄັມພີໃນບົດຮຽນນີ້:** ລູກາ 1:46-55

**ຄໍາຖາມຊີວິດ:** ທ່ານສາມາດຄົ້ນພົບຄວາມຍິນດີໄດ້ໂດຍການເຂົ້າຮ່ວມໃນແຜນການຂອງພຣະເຈົ້າ ໃຫ້ມີຄວາມເຂົ້າໃຈ ແລະມີປະສົບການຮູ້ເຖິງວິທີທີ່ພຣະເຈົ້າໄດ້ກະທໍາກິຈການຜ່ານຊີວິດຂອງທ່ານ.

**ພຣະຄັມພີແຫ່ງຄວາມຈິງ:** ນາງມາຣີອາໄດ້ສລອງການທີ່ພຣະເຈົ້າໄດ້ໃຊ້ຊີວິດຂອງລາວ ແລະໃນຊີວິດຂອງຄົນອື່ນໆທີ່ພຣະເຈົ້າຊົງໃຊ້ໃນປະວັດສາດ. ໃນທໍານອງດຽວກັນພຣະເຈົ້າໄດ້ກະທໍາກິຈການຜ່ານຕົວຮັບໃຊ້ມາແລ້ວ ແລະພຣະອົງກໍຍັງໃຊ້ພວກເຮົາໃນທຸກວັນນີ້ຄືກັນ.

**ຜົນສະທ້ອນຕໍ່ຊີວິດ:** ປະສົບການຂອງນາງມາຣີອາໄດ້ບອກວ່າພຣະເຈົ້າໄດ້ກະທໍາຢ່າງມະຫັສຈັນ. ພຣະອົງໄດ້ໃຊ້ຄົນທັມມະດາສາມັນຜູ້ທີ່ເຊື່ອຟັງພຣະອົງ ເພື່ອເຮັດໃຫ້ແຜນການຂອງພຣະອົງອັນຍິ່ງໃຫຍ່ສໍາເຣັດລົງ.

ເພງຄຣິສມາດ "ໃຫ້ໂລກຍິນດີ" ໄດ້ເປັນຜົນສະທ້ອນເຖິງຄວາມຍິນດີອັນເລີກ ເປັນສິ່ງທີ່ພຣະເຈົ້າຈະປະທານໃຫ້ຄົນຜູ້ທີ່ຮັບເອົາອົງພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນ. ເພງນີ້ໃຜໆກໍຮູ້ແລະຮ້ອງໄດ້ ຜູ້ຂຽນເພງນີ້ແມ່ນທ່ານ ອີຊາກ ວັດ ທ່ານເປັນສິດຍາພິບານຄົນອັງກິດ ທ່ານໄດ້ຂຽນເພງປະມານ 750 ເພງກ່ອນທ່ານໄດ້ເສັຽ ຊີວິດໃນປີ 1748. ເພງໃຫ້ໂລກຍິນດີ ແມ່ນເວົ້າເຖິງຄວາມຍິນທີ່ພຣະເຢຊູໄດ້ສະເດັດລົງມາປະສູດໃນໂລກນີ້ ແລະພຣະອົງໄດ້ບັນຊາສິ່ງທີ່ພຣະເຈົ້າຊົງສ້າງຂຶ້ນມາ. ໃນບົດຮຽນນີ້ພວກເຮົາສາມາດເຂົ້າໃຈເຖິງປະສົບການເຖິງຄວາມຍິນດີໃນເມື່ອພວກເຮົາໄດ້ຍອມມອບຊີວິດຕໍ່ພຣະເຈົ້າ ແລະເຂົ້າຫຸ້ນສ່ວນກັບແຜນການຂອງພຣະອົງ.

### 1. <u>ພວກເຮົາພົບຄວາມຍິນດີໃນເມື່ອຍອມວ່າພຣະເຢຊູຊົງເປັນພຣະເຈົ້າ</u>. (ລູກາ 1:46-50)

ລູກາໄດ້ກ່າວວ່າ ເທວະດາ ຄັບຣີເອັນ ໄດ້ໄປຫາ ຊາຂາຣີຢາເພື່ອບອກເຖິງການເກີດຂອງໂຢຮັນ ບັບຕິສໂຕ. ຕໍ່ນັ້ນມາ ຄັບຣີເອັນໄດ້ໄປຫານາງມາຣີອາ ຜູ້ເປັນຍິງສາວປອດ ນາງເປັນຄູ່ໝັ້ນຂອງໂຢເຊັບຜູ້ເປັນຊ່າງໄມ້ໃນເມືອງນາຊາເຣັດ, ເທວະດາໄດ້ບອກນາງວ່າພຣະເຈົ້າໄດ້ເລືອກເອົາລາວໃຫ້ຄອດບຸດຊາຍຊຶ່ງເປັນໄປໄດ້ດ້ວຍອົງພຣະວິນຍານບໍຣິສຸດ(ຂໍ້ 26-35). ເທວະດາຍັງໄດ້ກ່າວວ່າສິ່ງນີ້ບອກໃຫ້ຮູ້ຢ່າງແຈ່ມແຈ້ງໂດຍນາງເອລີຊາເບັດຜູ້ເປັນພີ່ນ້ອງ.

**ບົດເພງສັຣເສີນໃນປຶ້ມ ລູກາ 1-2**

ປະວັດສາດຄຣິສຕະຈັກໄດ້ໃສ່ຊື່ເພງສັຣເສີນສີ່ເພງໃນພາສາລາຕິນ ແຕ່ລູກາໄດ້ໃຊ້ເປັນເພງຈາກສອງບົດ. 1. ແມ່ນການຍິ່ງໃຫຍ່ (ລກ 1:46-55), ມາຣີອາໄດ້ສັຣເສີນຕໍ່ພຣະເຈົ້າໃນການກະທໍາຂອງພຣະອົງ. 2. ປິດລົງ (ລກ 1:68-79), ຜູ້ປະກາດພຣະທັມ ຊາຄາຣີຢາໄດ້ທໍານວາຍເຖິງພຣະກໍາເນີດຂອງອົງພຣະເຢຊູ. 3. ໃນການຍົກຍ້ອງ (ລກ 2:14), ພວກເທວະດາໄດ້ສັຣເສີນພຣະເຈົ້າໃນເວລາກໍາເນີດ ຂອງອົງພຣະເຢຊູ. 4. ເຫັນຈິງ (ລກ 2:29:32), ຊີເມ

ໂອນເອີ້ນຫາພຣະເຈົ້າໃຫ້ເອົາຕົນເອງກັບຄືນບ້ານ. ເພງເຫລົ່ານີ້ໄດ້ສັຣເສີນແຜນການອັນຍິ່ງໃຫຍ່ຂອງພຣະເຈົ້າ ການໄຖ່ບາບ ປະທານຄວາມພົ້ນໂດຍການສິ່ງອົງພຣະເຢຊູ ຜູ້ເປັນພຣະເມຊີອາທີ່ໄດ້ທໍານວາຍໄວ້ໃຫ້ເຂົ້າມາບັງເກີດໃນໂລກນີ້ຕາມພຣະຄັມພີ.

ໃນເມື່ອເທວະດາ ຄັບຣິເອັນໄດ້ກ່າວວ່າ, "ບໍ່ມີອັນໃດຍາກໄປກວ່າພຣະເຈົ້າເຮັດໄດ້" ມາຣີອາໄດ້ຕອບວ່າ, "ຂ້າພະອົງເປັນຜູ້ຮັບໃຊ້ອົງພຣະຜູ້ເປັນເຈົ້າ ຂໍໃຫ້ເປັນໄປຢ່າງນັ້ນເທີ້ນ" (ຂໍ້ 36-38).

ມາຣີອາ ໄດ້ເດີນທາງໄປຍັງເມືອງນາຊາເຣັດຊຶ່ງເປັນລະຍະທາງປະມານ 80 ໄມ. (ຂໍ້ 39). ເພື່ອຈະໄປຢາມອີເລຊາເບັດຜູ້ເປັນຍາດພີ່ນ້ອງ. ນາງເອລີຊາເບັດໄດ້ຕ້ອນຮັບນາງມາຣີອາເປັນຢ່າງດີເວລານາງໄປເຖິງທີ່ນັ້ນເພາະອົງພຣະວິນຍານໄດ້ເຕືອນວ່າມາຣີອາໄດ້ຕັ້ງຄັນແລະຈະເກີດບຸດເປັນອົງພຣະເມຊີອານ. ເວລາທັງສອງຄົນໄດ້ພົບການໜ້າຕໍ່ໜ້າພວກເຂົາກໍມີຄວາມຍິນດີເພາະພຣະເຈົ້າໄດ້ຊົງເລືອກເອົາເຂົາໄວ້ໃຫ້ໃຫ້ແຜນການພຣະເຈົ້າສໍາເຣັດ. (ຂໍ້ 45-46).

ມາຣີອາໄດ້ປະກາດເຖິງເຣື່ອງນີ້ດ້ວຍຄວາມປິຕິຍິນດີເປັນອັນໃຫຍ່-ນາງກ່າວວ່າຈະເວົ້າເຣື່ອງນີ້ຕລອດໄປເຖິງຄວາມຍິ່ງໃຫຍ່ໃນອົງພຣະຜູ້ເປັນເຈົ້າ ຜູ້ປະທານຄວາມພົ້ນແກ່ມະນຸດຊາດ. ຄໍາເວົ້າຂອງນາງໄດ້ບອກເຖິງຄວາມເຊື່ອແລະຄວາມເຂົ້າໃຈທີ່ພຣະເຈົ້າໄດ້ປະທານໃຫ້ຕາມຄວາມຕ້ອງການຂອງນາງ. ສ່ວນນາງ ເອລີຊາເບັດກໍເຫັນຄວາມເຊື່ອຂອງນາງມາຣີອາຈຶ່ງກ່າວວ່າ, "ຄວາມສຸກມີແກ່ນາງທີ່ໄດ້ເຊື່ອວ່າຈະສໍາເຣັດ ຕາມພຣະຄໍາທີ່ນາງໄດ້ຮັບຈາກອົງພຣະຜູ້ເປັນເຈົ້າ" (1:45).

ການທີ່ເຂົ້າໃຈວ່າພຣະເຈົ້າໄດ້ກະທໍາແລະເຊື່ອວ່າພຣະອົງໄດ້ຊອບພຣະທັຍໃນຕົວຂອງນາງເພາະນາງຍອມຖ່ອມໃຈການເປັນຂ້າທາດຮັບໃຊ້ ສິ່ງເຫລົ່ານັ້ນເຮັດໃຫ້ນາງມີຄວາມປິຕິຍິນດີເປັນຢ່າງໃຫຍ່ຫລວງຈົນເຮັດໃຫ້ນາງຍົກຍ້ອງສັຣເສີນພຣະອົງຂຶ້ນມາ-ພຣະອົງຍິ່ງໃຫຍ່ ພຣະນາມຂອງພຣະອົງແມ່ນບໍຣິສຸດ ແລະຄວາມເມດຕາຂອງພຣະອົງມີຕໍ່ທຸກໆຄົນຜູ້ທີ່ຢໍາເກງ-ພຣະອົງຊອບພຣະທັຍໃນຕົວນາງ.

ມາຣີອາ ມີຄວາມຍິນດີຈຶ່ງສັຣເສີນເຖິງສິ່ງທີ່ພຣະເຈົ້າໄດ້ກະທໍາໃນຊີວິດຂອງຕົນ ແລະໃນຊີວິດຂອງຄົນອື່ນອີກດ້ວຍຕລອດໄປ. ພຣະເຈົ້າໄດ້ປະທານຄວາມຍິນດີໃຫ້ແກ່ພວກເຮົາ ແລະພຣະອົງພໍພຣະທັຍທີ່ຈະກະທໍາກິຈການຕ່າງໆຜ່ານທາງຊີວິດຂອງພວກເຮົາໃນເມື່ອພວກເຮົາຍອມຖ່ອມຕົວລົງແລະມອບຊີວິດໄວ້ໃນພຣະອົງ. ພວກເຮົາໄດ້ຮຽນຮູ້ຕາມປະສົບມະການແລ້ວ ພຣະເຈົ້າໄດ້ນໍາເອົາຄວາມຍິນດີມາໃຫ້ແກ່ຄົນທໍາມະດາ ຜູ້ທີ່ໃຫ້ກຽດແລະຍອມໄວ້ວາງໃຈໃນພຣະອົງເພື່ອໃຫ້ແຜນການອັນຍິ່ງໃຫຍ່ສໍາເຣັດລົງ.

ທຸກໆຄົນຜູ້ຫັນຫາພຣະເຢຊູເຈົ້າດ້ວຍການຖ່ອມໃຈລົງດ້ວຍຄວາມເຊື່ອ ພຣະເຈົ້າກໍຈະຮັບເອົາດ້ວຍຄວາມພໍພຣະທັຍ ແລະປະທານຄວາມພົ້ນໃຫ້ແກ່ຄົນນັ້ນ. ສິ່ງທີ່ກ່າວມານີ້ຄວນນໍາຄວາມສຸກມາໃຫ້ພວກເຮົາຜູ້ທີ່ເຊື່ອແລະວາງໃຈໃນອົງພຣະເຢຊູ ໃຫ້ພວກເຮົາພາກັນຍົກຍ້ອງສັຣເສີນພຣະອົງໃນເວລານະມັສການ ແລະໃຫ້ພວກເຮົາມີຊີວິດໃຫ້ສົມຄວນຢູ່. ພວກເຮົາມີຄວາມເຊື່ອ ຄວາມຍິນດີ ແລະສາມາດເຂົ້າໄປຫາພຣະອົງດ້ວຍຄວາມຍໍາເກງເພື່ອຈະປະສົບກັບຄວາມຮັກແລະການໃຫ້ອະພັຍຈາກພຣະເຈົ້າ. ໃຫ້ພວກເຮົາພາກັນສັຣເສີນດ້ວຍຄໍາເວົ້າແລະການກະທໍາເທີ້ນ.

## 2. <u>ພວກເຮົາພົບຄວາມຍິນດີໃນວິທີພຣະເຈົ້າທໍາພາຣະກິດ</u> (ລູກາ 1:51-53)

**ເພງສັຣເສີນໃນພຣະຄັມພີໃໝ່**

ເພີ້ມຈາກເພງສີ່ເພງໃນປຶ້ມລູກາ, ພວກຄຣິສະຕຽນໃນສມັຍກ່ອນໄດ້ຮ້ອງ (ມາຣະໂກ 14:26) ພວກເຂົາເຈົ້າຍັງໃຊ້ເພງອື່ນໆເພີ້ມອີກໃນເວລານະມັສການ. ອາຈານໂປໂລໄດ້ສັ່ງໃຫ້ຄົນໃນສມັຍເດີມຮ້ອງເພງສັຣເສີນ (ອຟຊ 5:19). ເພງຫລາຍໆບົດທີ່ໃຊ້ຍົກຍ້ອງໄດ້ມີຢູ່ໃນພຣະຄັມພີໃໝ່. (ລູກາ 2:14; 1 ຕມທ 1:17; 6:15-16; ພນມ 4:8,11). ສ່ວນເພງອື່ນໆນັ້ນມາຈາກປຶ້ມໂຣມ 8:31-39; ເອເຟໂຊ 5:14; ແລະຕີໂຕ 3:4-7.

ນາງມາຣີອາ ໄດ້ສືບຕໍ່ຄວາມເຂົ້າໃຈໃນພາຣະກິດຂອງພຣະເຈົ້າໂດຍການເຄື່ອນຈາກລັກສະນະຂອງພຣະເຈົ້າ ແລະວິທີການຂອງພຣະອົງທີ່ເລືອກເອົາຄົນໃດຄົນນຶ່ງເພື່ອຈະອວຍພຣະພອນໃຫ້ນັ້ນ ເຂົ້າໄປຫາການບອກເຖິງອໍານາດເພື່ອເຮັດໃຫ້ແຜນການຂອງພຣະອົງສໍາເຣັດ. ນາງມາຣີອາໄດ້ໃຊ້ທໍານຽມຂອງພຣະຄັມພີ ເວລານີ້ນາງໄດ້ຮ້ອງເພງເປັນສິ່ງກົງກັນຂ້າມກັບຄວາມຫວັງຂອງຄົນສ່ວນຫລາຍທີ່ວ່າພຣະເຈົ້າຈະນໍາເອົາສິ່ງມີອໍານາດດ້ວຍພຣະຫັດຂອງພຣະອົງ.

ຄໍາກອນທີ່ເວົ້າເຖິງພຣະຫັດພຣະເຈົ້າ ແມ່ນກິຈການແລະອໍານາດ ທີ່ພຣະອົງຈະໃຫ້ມີຜູ້ອວດໂຕຈອງຫອງແຕກກະຈັດກະຈາຍໄປ ເອົາຜູ້ມີອໍານາດນັ່ງບັງລັງຕົກລົງໄດ້, ແລະສັ່ງໃຫ້ຄົນຮັ່ງມີໜີໄປມືເປົ່າ. ແລະພຣະອົງຈະປະທານຂອງດີແກ່ຜູ້ຕໍ່າຕ້ອຍ ແລະຄົນອຶດຫິວດ້ວຍອາຫານການກິນ. ໃຫ້ຮູ້ເຫັນວ່າການກະທໍາຂອງພຣະເຈົ້ານັ້ນແຕກຕ່າງກັບແຜນການຂອງມະນຸດ. ມາຣີອາໄດ້ບັນລະຍາຍເຖິງທຸຣະອັນຍິ່ງໃຫຍ່ຂອງພຣະເຈົ້າວ່າ ອົງພຣະເມຊີອາຈະເຮັດໃຫ້ຣາຊອານາຈັກຂອງພຣະເຈົ້າສໍາເຣັດລົງ.

ອົງພຣະເຢຊູໄດ້ສອນຜູ້ຕິດຕາມວ່າ ພວກເຮົາບໍ່ຄວນກະວົນກະວາຍເຖິງເນື້ອໜັງຮ່າງກາຍນີ້ຫລາຍ. ແຕ່ພວກເຮົາຄວນຊອກສແວງຫາຣາຊແຜ່ນດິນຂອງພຣະເຈົ້າແລະຄວາມຊອບທັມຂອງພຣະອົງກ່ອນ ແລະສິ່ງທັງປວງຈະເປັນທີ່ເພີ້ມເຕີມໃຫ້" (ມທ 6:33). ຕາມທີ່ອົງພຣະເຢຊູໄດ້ເບິ່ງແຍງຮັກສາພວກເຮົາ ແລະພຣະອົງຕ້ອງການໃຫ້ພວກເຮົາເຮັດຕໍ່ຄົນທຸກຍາກ, ຜູ້ຖືກທໍາລາຍ, ຄົນໄຮ້ທີ່ເພິ່ງເໝືອນທີ່ພຣະອົງໄດ້ເຮັດເພື່ອພວກເຮົາ.

| |
|---|
| ອົງຕາມຄໍາເວົ້າແລະການປະພຶດຂອງນາງມາຣີອາ. ພວກເຮົາຄວນເຂົ້າໄປຫາພຣະເຈົ້າດ້ວຍຄວາມຖ່ອມຕົວ ຢືນຕໍ່ພຣະພັກຂອງພຣະອົງດ້ວຍຄວາມເຊື່ອແລະຍອມກາຍເປັນຜູ້ຮັບໃຊ້. ພຣະເຈົ້າຊົງຮູ້ຈັກຈິດໃຈຂອງພວກເຮົາແຕ່ລະຄົນ-ຄົນຮັ່ງມີ ຫລືຍາກຈົນ, ມີອໍານາດຫລືອ່ອນແອ, ເປັນຄົນພິເສດ ຫລືຄົນທັມມະດາ. ພຣະເຈົ້າເປັນຫ່ວງຕໍ່ທຸກໆຄົນ. ມີແຕ່ຜູ້ເຊື່ອຟັງ ແລະຮັບໃຊ້ພຣະອົງຈະພົບເຫັນພຣະພອນອັນຍິ່ງໃຫຍ່. ໃນເມື່ອມີຄວາມລໍາບາກໃຫ້ໝັ້ນໃຈເຫັນວ່າພຣະເຈົ້າຜູ້ຍິ່ງໃຫຍ່ຈະເປັນຜູ້ຢູ່ນໍາແລະຊ່ວຍເຫລືອຕໍ່ສິ່ງເຮົາຕ້ອງການໃນຊີວິດ. |

## 3. <u>ພວກເຮົາມີຄວາມຍິນດີໃນພຣະເຈົ້າຜູ້ເພິ່ງພາໄດ້</u> (ລູກາ 1:54-55)

ຫລັງຈາກເວົ້າເຖິງປະວັດສາດທີ່ພຣະເຈົ້າໄດ້ກະທໍາຕໍ່ປະຊາກອນຂອງພຣະອົງເລີ້ມຕົ້ນຈາກ ອັບຣາຮາມ. ນາງມາຣີອາໄດ້ປະກາດວ່າພຣະປະສົງຂອງພຣະເຈົ້າໄດ້ສໍາເຣັດຕາພຣະສັນຍາຜ່ານທາງອົງພຣະເມຊີອາ. ພຣະເຈົ້າມີຄວາມເມດຕາສົງສານເປັນຫ່ວງພວກອິສຣາເອັນຂ້າໃຊ້ຂອງພຣະອົງ. ມາຣີອາໄດ້ກ່າວຊໍ້າອີກ ວ່າພຣະເຈົ້າຈະຊ່ອຍປະຊາກອນຂອງພຣະອົງໃຫ້ໄດ້ພົບເຫັນພຣະອົງ ແລະເຮັດໃຫ້ນໍ້າພຣະທັຍຂອງພຣະເຈົ້າສໍາເຣັດ.

ພຣະພອນທີ່ມອບໃຫ້ອັບຣາຮາມແລະເຊື້ອສາຍຕລອດໄປນັ້ນໄດ້ສໍາເຣັດລົງໃນຕົວຂອງອົງພຣະເຢຊູຄຣິດ, ຜູ້ເປັນພຣະເມຊີອາ, ຜູ້ສະເດັດລົງມາບັງເກີດກັບສາວປອດດ້ວຍຣິດເດດຂອງອົງພຣະວິນຍານບໍຣິສຸດ, ພຣະອົງມີຊີວິດປະເສີດ, ໄດ້ຍອມຕາຍເພື່ອຄວາມບາບຂອງໂລກ, ແລະໃນວັນທີສາມໄດ້ຄືນພຣະຊົນມາອີກ. ໃນທີ່ສຸດພຣະອົງກໍໄດ້ສະເດັດຄືນຂຶ້ນໄປເມືອງຟ້າສວັນເພື່ອທໍາໜ້າທີ່ເປັນພຣະມະຫາປະໂຣຫິດຕົນໃຫຍ່ ແລະປະກາດກັບຄົນຜູ້ເຂົ້າມາຫາພຣະອົງດ້ວຍຄວາມເຊື່ອ, ແລະຈະສະເດັດກັບຄືນມາຄັ້ງທີສອງເພື່ອມາຕັ້ງຣາຊອານາຈັກຄືນອົງຕາມພຣະຄັມພີພຣະນິມິດ 21-22.

ຕາມອົງພຣະເຢຊູຜູ້ໄດ້ຊ່ອຍເຫລືອພວກເຮົາ, ພຣະອົງມີພຣະປະສົງໃຫ້ພວກເຮົາຊ່ອຍເຫລືອຄົນອື່ນຜູ້ທຸກຍາກ, ຜູ້ຖືກທຳຮ້າຍຮ່າງກາຍ, ຜູ້ຂາດ ທີ່ເພິ່ງພາອາສັຍ.

ຕາມຄວາມຈິງຂ້າງເທິງນີ້ ພວກເຮົາຜູ້ທີ່ເຊື່ອຢ່າພາກັນເສັຽໃຈໃນຂະນະທີ່ກຳລັງລໍຄອຍພຣະສັນຍາກາຍເປັນຈິງນັ້ນ. ໃນພາກັນໝັ້ນໃຈເຫັນວ່າພວກເຮົາຢູ່ຝ່າຍຊັຍຊະນະ! ພວກເຮົາຈະບໍ່ເຂົ້າໃຈໃນທຸກສິ່ງຢ່າງໃນການກະທຳຂອງພຣະເຈົ້າ ແຕ່ໃຫ້ຮູ້ຄັກແນ່ວ່າພຣະເຈົ້າເປັນຜູ້ບັນຊາປົກຄອງຢູ່. ເຖິງແມ່ນວ່ານານໄດ້ເຮັດໃຫ້ຊີວິດຂອງມະນຸດໄດ້ຮັບເຄາະກັມ. ໃຫ້ພວກເຮົາພາກັນສຶກສາພຣະຄັມພີແລະຮູ້ວ່າໃນທີ່ສຸດພຣະເຈົ້າກໍຈະໄດ້ມັດພະຍາມານໄວ້ແລະຖິ້ມໃນທີ່ມືດ.

## ບົດຮຽນໃນຊີວິດ

ເປັນຄວາມຈິງແທ້ທີ່ຄວາມຍິນດີອັນແທ້ຈິງນັ້ນແມ່ນການຮັບເອົາອົງພຣະເຢຊູມາເປັນພຣະຜູ້ຊ່ອຍໃຫ້ລອດ ແລະເຂົ້າຮ່ວມກັບແຜນການຂອງພຣະເຈົ້າ. ເພງທີ່ນາງມາຣີອາໄດ້ກ່າວນັ້ນແມ່ນເວົ້າເຖິງການສລອງເຖິງຄວາມຍິນດີທີ່ຮູ້ວ່າພຣະເຈົ້າໄດ້ໃຊ້ຊີວິດຂອງລາວຄືເລືອກເອົາລາວເປັນຜູ້ໃຫ້ກຳເນີດ ພຣະບຸດຂອງພຣະເຈົ້າ.

ເພງຂອງນາງມາຣີອາຊຶ່ງສາມາດດົນໃຈໄດ້, ພວກເຮົາອາດຮຽນເຖິງຄວາມຈິງນັ້ນເພື່ອຊ່ອຍໃຫ້ເຮົາປະສົບການກັບຄວາມຍິນດີອັນແທ້ຈິງ:

- ພວກເຮົາມີຄວາມຍິນດີໃນເມື່ອເຂົ້າໃຈ ຍອມຮັບ ສລອງເຖິງຄວາມຈິງວ່າພຣະເຈົ້າຜູ້ມີອຳນາດ ບໍຣິສຸດພໍພຣະທັຍເປີດໂອກາດໃຫ້ທຸກຄົນເຂົ້າມາຫາພຣະອົງດ້ວຍຄວາມເຊື່ອແລະຮັບໃຊ້.
- ພວກເຮົາປະສົບກັບຄວາມຍິນດີໃນເມື່ອທວນຄິດເຖິງແນວທາງທີ່ພຣະເຈົ້າໄດ້ກະທຳພາຣະກິດຕ່າງໆເພື່ອໃຫ້ປະທານຄວາມລອດພົ້ນໃຫ້ທຸກໆຄົນໂດຍທາງອົງພຣະເຢຊູ.
- ພວກເຮົາປະສົບກັບຄວາມຍິນດີຢ່າງໝັ້ນໃຈເພາະພຣະເຈົ້າທີ່ເຮົາເຊື່ອຖືນັ້ນເພິ່ງອາສັຍໄດ້ ແລະຈະເຮັດໃຫ້ຄຳສັນຍາກາຍເປັນຈິງຕໍ່ອັບຣາຮາມ ແລະຕໍ່ທຸກໆຄົນຜູ້ເຊື່ອຟັງພຣະອົງ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.